ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ.ສຂ ຈຳໜ່າຍພັນທະບັດ ທຫລ ໄດ້ 107 ຕື້ກີບ





ໃນກາງເດືອນຕຸລາຜ່ານມານີ້; ທ່ານ ພູຄຳ ແພງທາລັງສີ ຫົວໜ້າທະນາຄານການຄ້າຕ່າງປະເທດລາວ ສາຂາ ສະຫວັນນະເຂດ (ທຄຕລ.ສຂ) ໄດ້ແຈ້ງໃຫ້ຮູ້ວ່າ: ທຄຕລ.ສຂ ມີຍອດຈຳໜ່າຍພັນທະບັດຂອງທະນາຄານແຫ່ງ ສປປ ລາວ ທັງໝົດ 107 ຕື້ກີບ (ມາຮອດວັນທີ 14 ຕຸລາ 2022) ແລະ ຍັງຈະສືບຕໍ່ຈຳໜ່າຍໄປຕື່ມຊຶ່ງມີອາຍຸ 6 ເດືອນ, ເປັນສະກຸນເງິນກີບ; ອັດຕາດອກເບ້ຍ 20% ຕໍ່ປີ; ປະເພດອັດຕາດອກເບ້ຍຄົງທີ່, ບໍ່ສາມາດປ່ຽນມືໄດ້ ຊຶ່ງມີມູນຄ່າອອກພັນທະບັດທັງໝົດ 5.000 ຕື້ກີບ, ມູນຄ່າຕໍ່ໜ່ວຍ 100.000 ກີບ; ຈຳນວນໜ່ວຍທີ່ອອກ 50.000.000 ໜ່ວຍ ໂດຍຂາຍຜ່ານຕົວແທນ 9 ທະນາຄານ ຊຶ່ງໃນນີ້ກໍ່ມີ ທຄຕລ; ໄລຍະການຂາຍພັນທະບັດງວດ I ມູນຄ່າ 5.000 ຕື້ກີບ ແບ່ງອອກເປັນ 15 ຄັ້ງ, ຄັ້ງລະ 5 ວັນລັດຖະການ, ເລີ່ມຂາຍນັບແຕ່ວັນທີ 15.06.2022 ເປັນຕົ້ນໄປຈົນກ່ວາສຳເລັດ ແລະ ການຈ່າຍຕົ້ນທຶນ ແລະ ດອກເບ້ຍ ເມື່ອຄົບກຳນົດໄຖ່ຖອນ; ສຳລັບຍອດການຈຳໜ່າຍພັນທະບັດ.

ທ່ານຫົວໜ້າ ທຄຕລ.ສຂໄດ້ແຈ້ງຜົນການດຳເນີນທຸລະກຳຂອງສາຂາ ໃນ 9 ເດືອນ/2022 ວ່າ: ສາມາດລະດົມທຶນໄດ້ 119% ຂອງແຜນການ ປີ 2022; ຂະນະດຽວກັນ, ກໍ່ສາມາດສະໜອງສິນເຊື່ອສ່ວນໃຫຍ່ໄດ້ນຳໃຊ້ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ ເປັນຕົ້ນໂຄງການກໍ່ສ້າງເສັ້ນທາງ ແລະ ຮອງລົງມາແມ່ນປ່ອຍເຂົ້າໃນຂະແໜງການຄ້າ ແລະ ການບໍລິການສາມາດປະຕິບັດໄດ້ໄຕມາດ 3 ບັນລຸ 55% ຂອງແຜນການ ປີ 2022 ແລະ ສາຂາໄດ້ມີກຳໄລໃນ 9 ເດືອນທຽບໃສ່ແຜນການປີ 10,44% ຂອງແຜນການປີ 2022.

ທຄຕລ.ສຂ ມີພາລະບົດບາດເຄື່ອນໄຫວທຸລະກິດດ້ານການເງິນການທະນາຄານ, ເງິນຕາ ຕາມນະໂຍບາຍ ແລະ ກົດໝາຍຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການລະດົມທຶນ ດ້ວຍຮູບການເງິນຝາກຫຼາຍປະເພດ, ສະໜອງແຫຼ່ງທຶນດ້ວຍຮູບການໃຫ້ກູ້ຢືມແກ່ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການພາຍໃນແຂວງ, ບໍລິການຊຳລະສະສາງທັງພາຍໃນ-ຕ່າງປະເທດ, ບໍລິການຜະລິດຕະພັນບັດຕ່າງໆ, ຊຳລະຄ່າສາທາລະນຸປະໂພກຕ່າງໆ ແລະ ບໍລິການດ້ານອື່ນໆອີກຫຼາກຫຼາຍປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ.

**# ຂ່າວ: ຣັດສະໝີ ດວງສັດຈະ**